Mekong River Commission
For Sustainable Development

# ບົດອອກຂ່າວ

**ສາມາດອອກຂ່າວໄດ້ທັນທີ**

## ຄມສ ເປີດໂຕ ຊ່ອງໂທລະພາບ ເພື່ອສົ່ງເສີມຄວາມຮັບຮູ້ຂອງສາທາລະນະ ກ່ຽວກັບ ຄວາມສ່ຽງຕໍ່ໄພນໍ້າຖ້ວມແລະໄພແຫ້ງແລ້ງ ໃນອ່າງແມ່ນໍ້າຂອງຕອນລຸ່ມ

**ທີ່ນະຄອນຫຼວງວຽງຈັນ, ສປປ ລາວ, ວັນທີ 4 ສິງຫາ 2023** — ຄະນະກຳມາທິການແມ່ນໍ້າຂອງສາກົນ (ຄມສ) ໄດ້ເປີດໂຕ ຊ່ອງໂທລະພາບ ພະຍາກອນໄພນໍ້າຖ້ວມແລະໄພແຫ້ງແລ້ງ ໃນແມ່ນໍ້າຂອງ ໂດຍມີເປົ້າໝາຍເພື່ອ ສົ່ງເສີມຄວາມຮັບຮູ້ຂອງສາທາລະນະ ແລະ ຄວາມເຂົ້າໃຈກ່ຽວກັບ ສະພາບຂອງແມ່ນໍ້າຂອງ ໃນອ່າງແມ່ນໍ້າຂອງຕອນລຸ່ມ (LMB). ເລີ່ມຈາກເດືອນກໍລະກົດ 2023, ຊ່ອງໂທລະພາບດັ່ງກ່າວນີ້ ຈະໃຫ້ຮູ້ເຖິງຂ່າວໃໝ່ຫຼ້າສຸດ ເປັນປະຈຳ ກ່ຽວກັບ ລະດັບນໍ້າໃນປະຈຸບັນ, ປະລິມານນໍ້າໄຫຼ ແລະ ຄາດຄະເນຄວາມສ່ຽງຈາກໄພນໍ້າຖ້ວມແລະໄພແຫ້ງແລ້ງ ສຳລັບປະຊາຊົນ ທີ່ອາໃສຢູ່ລຽບຕາມແມ່ນໍ້າຂອງ ໂດຍການອອກອາກາດເປັນພາສາອັງກິດ ເຊິ່ງມີຄຳບັນຍາຍແທນສຽງ ເປັນພາສາຂອງເທດແມ່ນໍ້າຂອງ. ມັນຈະອອກອາກາດ ທຸກໆວັນຈັນ ໃນໄລຍະລະດູຝົນນີ້ ທາງສື່ສັງຄົມອອນລາຍຂອງ ກອງເລຂາ ຄມສ ກໍ່ຄື ເຟສ໌ບຸກ ແລະ ຢູທູບ.

ແມ່ນໍ້າຂອງ ປະສົບກັບ ນໍ້າຖ້ວມ ທຸກໆປີ ເຊິ່ງສາມາດນຳໄປສູ່ ທັງຜົນກະທົບດ້ານບວກ ແລະ ຜົນກະທົບດ້ານລົບ ໃນອ່າງແມ່ນໍ້າຂອງຕອນລຸ່ມ. ປາກົດການນໍ້າຖ້ວມປະຈຳປີ ຈະຂັບເຄື່ອນ ການປະມົງໃນອ່າງແມ່ນໍ້າແຫ່ງນີ້, ຮັກສາຮູບປະພັນສັນຖານຂອງແມ່ນໍ້າ ພ້ອມທັງ ນຳເອົາຕະກອນມາປັບປຸງຄວາມອຸດົມສົມບູນຂອງດິນ. ນໍ້າຖ້ວມ ກໍ່ຍັງສາມາດ ມີຜົນກະທົບດ້ານລົບເຊັ່ນກັນ ຕໍ່ກັບ ກິດຈະການທາງເສດຖະກິດ ແລະ ກິດຈະກຳຂອງມະນຸດ, ເຮັດໃຫ້ເປັນອັນຕະລາຍຕໍ່ຊີວິດ ແລະ ສ້າງຄວາມເສຍຫາຍໃຫ້ ໂຄງລ່າງພື້ນຖານ, ຖິ່ນຖານ ແລະ ການບໍລິການທີ່ຈຳເປັນ.

ອີກດ້ານໜຶ່ງນັ້ນ, ໄພແຫ້ງແລ້ງ ຈະນຳໄປສູ່ ຄວາມຫຍຸ້ງຍາກທາງເສດຖະກິດ-ສັງຄົມ ໃນປະເທດແຄມຝັ່ງນໍ້າ. ໄລຍະເວລາ ແລະ ຄວາມໜັກໜ່ວງຂອງ ຜົນກະທົບຈາກໄພແຫ້ງແລ້ງນັ້ນ ໄດ້ເພີ່ມຂຶ້ນຫຼາຍ ໃນໄລຍະສອງທົດສະວັດຜ່ານມາ ແລະ ໂດຍອີງຕາມ ເຫດການສະພາບອາກາດຕ່າງໆແລ້ວ ມັນມີຄວາມເປັນໄປໄດ້ທີ່ ອ່າງແມ່ນໍ້າຂອງຕອນລຸ່ມ ຈະປະສົບກັບ ໄພແຫ້ງແລ້ງທີ່ຮຸນແຮງຫຼາຍຂຶ້ນ ໃນອະນາຄົດ ຍ້ອນຝົນຕົກໜ້ອຍລົງ, ອຸນະພູມອາກາດສູງຂຶ້ນ ແລະ ການລະເຫີຍອາຍນໍ້າຈາກພືດ ສູງຂຶ້ນ. ປະຊາກອນທີ່ເພິ່ງພາອາໃສແມ່ນໍ້າຂອງ ເພີ່ມຂຶ້ນນັ້ນ ຍັງຈະເພີ່ມຄວາຕ້ອງການນໍ້າຫຼາຍຂຶ້ນ ໃນທຸກໆຂະແໜງການ.

ເພື່ອແກ້ໄຂບັນຫາທ້າທາຍເລົ່ານີ້, ທ່ານ ດຣ. ອານຸລັກ ກິດຕິຄຸນ, ຫົວໜ້າກອງເລຂາ ຄະນະກຳມາທິການແມ່ນໍ້າຂອງສາກົນ ໄດ້ກ່າວໄວ້ວ່າ: "ໃນປະຈຸບັນນີ້ ຄມສ ສະໜອງຂໍ້ມູນລາຍວັນ ກ່ຽວກັບ ການຕິດຕາມແມ່ນໍ້າ, ການພະຍາກອນນໍ້າຖ້ວມ, ຄຳແນະນຳກ່ຽວກັບ ເຫດການນໍ້າໄຫຼນອງ ແລະ ການພະຍາກອນໄພແຫ້ງແລ້ງ ເພື່ອສະໜັບສະໜູນ ບັນດາປະເທດສະມາຊິກ ໃນການຈັດການກັບຄວາມສ່ຽງຕ່າງໆ. ນອກຈາກນັ້ນແລ້ວ ພວກເຮົາຍັງກຳລັງສ້າງ ມາດຕະການຕ່າງໆ ເພື່ອປັບຕົວເຂົ້າກັບໄພແຫ້ງແລ້ງ. ການເປີດຕົວຊ່ອງໂທລະພາບ ພະຍາກອນໄພນໍ້າຖ້ວມແລະໄພແຫ້ງແລ້ງ ຂອງ ຄມສ ນັ້ນ ແມ່ນເປັນສ່ວນໜຶ່ງຂອງ ຄວາມພະຍາຍາມຕໍ່ເນື່ອງຂອງພວກເຮົາ ເພື່ອນຳເອົາ ຂໍ້ມູນຫຼ້າສຸດ ແລະ ຂໍ້ມູນທີ່ເປັນປະໂຫຍດ ກ່ຽວກັບ ຄວາມສ່ຽງຕໍ່ໄພນໍ້າຖ້ວມແລະໄພແຫ້ງແລ້ງ ມາໃຫ້ປະຊາຊົນໃນອ່າງແມ່ນໍ້າແຫ່ງນີ້ ໃນຊ່ອງທາງທີ່ເຂົ້າເຖິງໄດ້ຫຼາຍຂຶ້ນ. ນອກຈາກການ

ອັບເດດຂໍ້ມູນຂ່າວສານ ໃນເວບໄຊ໌ຂອງພວກເຮົາແລ້ວ, ພວກເຮົາຫວັງວ່າ ຊ່ອງໂທລະພາບນີ້ ຈະສາມາດເຂົ້າເຖິງ ປະຊາຊົນຫຼາຍລ້ານຄົນ ທີ່ອາໄສຢູ່ລຽບຕາມແມ່ນ້ຳຂອງ.”

ທ່ານນາງ ຮ່າ ເຮັນ ນີ ເອ (H’Hen Nie), ນາງງາມຈັກກະວານແຫ່ງປະເທດຫວຽດນາມ ປີ 2017 ຜູ້ທີ່ໄດ້ຊ່ວຍໂຄສະນາຊ່ອງໂທລະພາບ ພະຍາກອນໄພນ້ຳຖ້ວມແລະໄພແຫ້ງແລ້ງ ຂອງ ຄມສ ນີ້ ໄດ້ເນັ້ນໜັກໃຫ້ເຫັນເຖິງ ຄວາມສຳຄັນຂອງການໃຫ້ຂໍ້ມູນຫຼ້າສຸດ ກ່ຽວກັບ ໄພແຫ້ງແລ້ງແລະໄພນ້ຳຖ້ວມ ໃຫ້ທັນເວລາ ໂດຍການເວົ້າວ່າ: “ເຂດສາມລ່ຽມປາກແມ່ນ້ຳຂອງ ແມ່ນເປັນທີ່ຮັບຮູ້ກັນດີວ່າ ເປັນອູ່ເຂົ້າ ຂອງພາກພື້ນນີ້, ສະນັ້ນ ໄພແຫ້ງແລ້ງຫຼືໄພນ້ຳຖ້ວມໃດໜຶ່ງ ໃນຂົງເຂດພື້ນທີ່ນີ້ສາມາດມີຜົນກະທົບໂດຍກົງກັບ ຊີວິດຂອງປະຊາຊົນ.”

ກອງເລຂາ ຄມສ ຫວັງວ່າ ຈະໄດ້ຮັບການສະໜັບສະໜູນຫຼາຍຂຶ້ນຈາກ ບັນດາຜູ້ມີຊື່ສຽງ ແລະ ຜູ້ທີ່ມີຜູ້ຕິດຕາມຈຳນວນຫຼາຍໃນສື່ສັງຄົມອອນລາຍ ໃນບັນດາປະເທດສະມາຊິກທັງ 4 ປະເທດ ເພື່ອໂຄສະນາ ຊ່ອງໂທລະພາບ ພະຍາກອນໄພນ້ຳຖ້ວມແລະໄພແຫ້ງແລ້ງ ຂອງ ຄມສ ໃຫ້ກຸ່ມຄົນໃນວົງກວ້າງ. ສິ່ງດັ່ງກ່າວນີ້ ຈະຊ່ວຍສະໜັບສະໜູນ ການຄຸ້ມຄອງໄພພິບັດ ແລະ ການຕອບໂຕ້ສຸກເສີນ ແລະ ປະກອບສ່ວນໃຫ້ ການສ້າງອ່າງແມ່ນ້ຳຂອງ ທີ່ສາມາດປັບຕົວໄດ້ຫຼາຍຂຶ້ນ ແລະ ຍືນຍົງຫຼາຍຂຶ້ນ.

ເພື່ອເບິ່ງວິດີໂອຂອງທ່ານນາງ ຮ່າ ເຮັນ ນີ ເອ (H’Hen Nie) ທີ່ໂຄສະນາສະໜັບສະໜູນ ຊ່ອງໂທລະພາບພະຍາກອນໄພນ້ຳຖ້ວມແລະໄພແຫ້ງແລ້ງ ຂອງ ຄມສ ນັ້ນ, ກະລຸນາຄລິກໃສ່ ບ່ອນນີ້. ຊ່ອງໂທລະພາບດັ່ງກ່າວນີ້ ໄດ້ອອກອາກາດແລ້ວ 3 ຄັ້ງ ໃນວັນທີ 17 ກໍລະກົດ 2023, 24 ກໍລະກົດ 2023 ແລະ 31 ກໍລະກົດ 2023.

**ຂໍ້ມູນສຳລັບບັນນາທິການຂ່າວ:**

ຄມສ ແມ່ນອົງການຈັດຕັ້ງ ລະຫວ່າງລັດຖະບານ ເພື່ອການປຶກສາຫາລື ແລະ ການຮ່ວມມືລະດັບພາກພື້ນ ໃນອ່າງແມ່ນ້ຳຂອງຕອນລຸ່ມ. ສ້າງຕັ້ງຂຶ້ນໃນປີ 1995 ຕາມສັນຍາແມ່ນ້ຳຂອງ ລະຫວ່າງ ປະເທດກຳປູເຈຍ, ປະເທດລາວ, ປະເທດໄທ ແລະ ປະເທດຫວຽດນາມ. ອົງການດັ່ງກ່າວນີ້ ເຮັດໜ້າທີ່ເປັນກົນໄກລະດັບພາກພື້ນ ເພື່ອການຮ່ວມມື ກ່ຽວກັບນ້ຳ ແລະ ທັງເປັນສູນກາງຄວາມຮູ້ ກ່ຽວກັບ ການຄຸ້ມຄອງຊັບພະຍາກອນນ້ຳ ເພື່ອການພັດທະນາຢ່າງຍືນຍົງ ໃນພາກພື້ນນີ້.

**-ຈົບ-**

**ຖ້າຕ້ອງການຂໍ້ມູນເພີ້ມຕື່ມ, ກະລຸນາຕິດຕໍ່:**
ທ່ານນາງ ເລ ທິ ເຮືອງ ຫຼຽນ (Le Thi Huong Lien), ພະນັກງານປະຊາສຳພັນພາກສະໜາມ
ກອງເລຂາ ຄະນະກຳມາທິການແມ່ນ້ຳຂອງສາກົນ
ອີເມວ: lien@mrcmekong.org
ມືຖື: +856 20 9831 1496

###